ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດທະນາຖາວອນ

---------------------------

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0305/ກປ2001

ນະຄອນຫຼວງວຽງຈັນ, ວັນທີ................

ເຖິງ: ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

ເລື່ອງ: ນິຍາມຄຳວ່າ "ໄຮ່" ແລະ ເນື້ອທີ່ກະສິກຳເຂດເນີນສູງ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ89/ນຍ, ລົງວັນທີ 22/06/1999 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມການສຶກສາຄົ້ນຄ້ວາ ແລະ ສັງລວມຄຳເຫັນຈາກຫຼາຍພາກສ່ວນ ເພື່ອປັບປຸງເນື້ອໃນກ່ຽວກັບ ນິຍາມຄຳວ່າ "ໄຮ່" ແລະ ເນື້ອທີ່ກະສິກຳເຂດເນີນສູງ ຂອງກົມປ່າໄມ້.
- ອີງຕາມການຄົ້ນຄ້ວາ ແລະ ສະເໜີຂອງສະພາວິທະຍາສາດ ເຕັກນິກກະສິກຳ ແລະ ປ່າໄມ້.

ເພື່ອຫັນປ່ຽນວິທີທຳມາຫາກິນ ດ້ວຍການຖາງປ່າເຮັດໄຮ່ ຊຶ່ງແມ່ນການຜະລິດກະສິກຳແບບຫຼ້າຫຼັງ ມາເຮັດການຜະລິດແບບຄົງທີ່ໂດຍມີການມອບດິນ ແລະ ມອບປ່າ ໃຫ້ຄອບຄົວເຮັດການຜະລິດປູກຝັງ, ລ້ຽງສັດ, ປູກຕົ້ນໄມ້ ແລະ ປົກປັກຮັກສາປ່າໄມ້ ແນໃສ່ເຮັດໃຫ້ຊາວຊົນນະບົດມີອາຊີບທີ່ໝັ້ນຄົງ ແລະ ຫຼຸດຜ່ອນການຖາງປ່າເຮັດໄຮ່ເທື່ອລະກ້າວ. ສະນັ້ນ ເພື່ອຄວາມເປັນເອກະພາບທາງດ້ານທັດສະນະ ແລະ ຄວາມເຂົ້າໃຈ, ເຮັດໃຫ້ການເກັບກຳຂໍ້ມູນກ່ຽວກັບເນື້ອທີ່ໄຮ່ຖືກຕ້ອງກັບຕົວຈິງ.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການດັ່ງນີ້:

- <u>**ໄຮ່**</u> ແມ່ນເນື້ອທີ່ທຳການຜະລິດກະສິກຳ ແບບພື້ນເມືອງ ແລະ ປະຖົມປະຖານທີ່ສຸດທີ່ເກີດຈາກການບຸກລຸກທຳລາຍປ່າໄມ້ທຸກໆຊະນິດທີ່ມີການຖາງ, ຈູດ ແລະ ຮື້ ເພື່ອການປູກເຂົ້າເປັນຕົ້ນຕໍ ແລະ ພືດພັນທັນຍາຫານຕ່າງໆ ເພື່ອລ້ຽງຊີບແບບທຳມະຊາດ. ແຕ່ສ່ວນໃຫຍ່ກໍ່ບໍ່ກຸ້ມກິນ ພາໃຫ້ຊາວໄຮ່ນັບມື້ນັບທຸກຍາກລົງ ເພາະວ່າແບບວິທີການຜະລິດມັນຫຼ້າຫຼັງ, ບໍ່ມີການກຽມດິນ ແລະ ນ້ຳຊົນລະປະທານຫຍັງເລີຍ.
- <u>**ເນື້ອທີ່ກະສິກຳເຂດເນີນສູງ.**</u> ແມ່ນເນື້ອທີ່ປອກໂລ້ນ ທີ່ຕົ້ນໄມ້ບໍ່ສາມດເຕີບໃຫຍ່ຂະຫຍາຍຕົວ ແລະ ຟື້ນຟູດ້ວຍທຳມະຊາດໄດ້ ຊຶ່ງໄດ້ນຳໃຊ້ເຕັກນິກ, ເຕັກໂນໂລຊີ ເຂົ້າຊ່ວຍໃນການກຽມດິນ ແລະ ການບົວລະບັດຮັກສາເຮັດໃຫ້ເນື້ອທີ່ດັ່ງກ່າວມີຄວາມອຸດົມສົມບູນ ເພື່ອກາຍເປັນເນື້ອທີ່ດິນກະສິກຳຖາວອນ ແລະ ໃຫ້ຜົນຜະລິດຢ່າງຍືນນານ ອາດນຳໃຊ້ເພື່ອການປູກພືດ, ຕົ້ນໄມ້ຢືນຕົ້ນ ຫຼື ສ້າງເປັນທົ່ງຫຍ້າລ້ຽງສັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ບ່ອນສົ່ງ

- ບັນດາກົມຕ່າງໆອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້
- ເກັບມ້ຽນ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້